**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 0975/ກງ

ນະຄອນຫລວງວຽງຈັນ, ວັນທີ 01 ເມສາ 2019

# ແຈ້ງການ

**ເຖິງ** : ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງ ຫລື ນຳໃຊ້ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວປະເທດ.

**ເລື່ອງ** : ການເລື່ອນໄລຍະເວລາປົກກະຕິຂອງການຊໍາລະຄ່າທານຽມທາງ ປະຈໍາປີ 2019

- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດ ລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017;
- ອີງຕາມ ແຈ້ງການ ການເສຍຄ່າທຳນຽມທາງ ປະຈຳປີ 2019 ສະບັບເລກທີ 0526/ກງ, ລົງວັນທີ 15 ກຸມພາ 2019;
- ອີງຕາມ ໜັງສືຂອງກົມສ່ວຍສາອາກອນ ສະບັບເລກທີ 1171/ກສອ, ລົງວັນທີ 29 ມີນາ 2019.

ເພື່ອເຮັດໃຫ້ການເກັບຄ່າທຳນຽມທາງປະຈຳປີ 2019 ຖືກຈັດຕັ້ງປະຕິບັດຢ່າງເປັນຂະບວນການ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງ ຫລື ນຳໃຊ້ ຍານພາຫະນະ ໃນຂອບເຂດທົ່ວປະເທດ ຊາບວ່າ: ໄລຍະເວລາປົກກະຕິຂອງການຊຳລະຄ່າທຳນຽມທາງປະຈຳປີ 2019 ໄດ້ເລື່ອນຈາກມື້ສຸດທ້າຍວັນທີ **31 ມີນາ 2019 ເປັນວັນທີ 30 ມິຖຸນາ 2019**, ຖ້າກາຍກຳນົດເວລາດັ່ງກ່າວນີ້ ( ນັບແຕ່ວັນທີ 01 ກໍລະກົດ ຮອດ 31 ທັນວາ 2019 ) ແມ່ນ**ຈະຖືກປັບໃໝ 0,1% ຕໍ່ມື້ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງປະຈຳປີ** ຕາມທີ່ໄດ້ກຳນົດໄວ້ໃນ IV ຂໍ້ 2.ຂ ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ລັດຖະມົນຕີກະຊວງການເງິນ**

ກະຊວງການເງິນ

ລັດຖະມົນຕີ

ສົມດີ ດວງດີ